ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື ເລກທີ 493 /ຈຂ.ອປ

ອັດຕະປື, ວັນທີ 30 ພຶດສະພາ 2017

# ຂໍ້ຕົກລົງ

## ວ່າດ້ວຍການອະນຸມັດ ເຂດພື້ນທີ່ດິນປ່າສະຫງວນ ດົງຫົວຊ້າງເປັນເຂດສະຫງວນເພື່ອການທ່ອງທ່ຽວ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ໃບສະເໜີຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ສະບັບເລກທີ 66/ຖວທ, ລົງວັນທີ 22 ພຶດສະພາ 2017.

### ເຈົ້າແຂວງຕົກລົງ

ມາດຕາ 1. ຕົກລົງອະນຸມັດພື້ນທີ່ດິນ ປ່າສະຫງວນດົງຫົວຊ້າງພື້ນທີ່ 250 ເຮັກຕາ ຢູ່ບ້ານໄຊສີ ແລະ ບ້ານຄັນມະກ່ອງ ເມືອງໄຊເສດຖາ ແຂວງອັດຕະປື ເປັນເຂດສະຫງວນເພື່ອການທ່ອງທ່ຽວ ເຊິ່ງມີຊາຍແດນຕິດຈອດດັ່ງນີ້:

- ທິດເໜືອ ຕິດກັບເສັ້ນທາງ 18 B ຍາວ 742 ແມັດ
- ທິດເໜືອ ຕິດກັບສາຍນ້ຳເຊກະໝານ ຍາວ 3,088 ແມັດ
- ທິດໃຕ້ ຕິດກັບເສັ້ນທາງ ຍາວ 1,781 ແມັດ
- ທິດຕາເວັນຕົກ ຕິດກັບທົ່ງນາບ້ານໄຊສີ ຍາວ 1,945 ແມັດ

ມາດຕາ 2. ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ໃຊ້ສິດເຕັມສ່ວນໃນການຄຸ້ມຄອງເນື້ອທີ່ດິນດັ່ງກ່າວ ແລະ ສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເພື່ອອອກອະນຸຍາດນຳໃຊ້ດິນລັດເປັນດິນຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງຄຸ້ມຄອງ.

ມາດຕາ 3. ພາກສ່ວນຈັດຕັ້ງທຸກຂັ້ນ, ຂະແໜງການ ແລະ ບຸກຄົນທີ່ມີສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 4. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ບ່ອນນຳສົ່ງ:

- ຫ້ອງວ່າການແຂວງ 01 ສະບັບ
- ພະແນກ ຖວທ ແຂວງ 01 ສະບັບ
- ເຈົ້າເມືອງ ໄຊເສດຖາ 01 ສະບັບ
- ພະແນກ ຊສ 01 ສະບັບ
- ເກັບຮັກສາໄວ້ 01 ສະບັບ

ແຂວງອັດຕະປື

ປອ ນາມ ວົງຍະເພດ